ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ກັນຍາ 2009 (9-27-2009)

---

# ຜົນຂອງການຮູ້ຈັກກັບພຣະເຢຊູ

**ຂໍ້ພຣະຄັມພີໃນບົດຮຽນ:** ມາຣະໂກ 8:34-38; 9:33-37; 10:32-34

## ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ທ່ານຈະໄດ້ຖືກທ້າທາຍໃຫ້ສຳຣວດການຕັດສິນໃຈຂອງທ່ານຕໍ່ພຣະຄຣິດໂດຍການຮຽກເອີ້ນຂອງພຣະອົງໃຫ້ປະຕິເສດຕົວເອງ, ຮັບໃຊ້ໂດຍບໍ່ເຫັນແກ່ຕົວ, ແລະມີຄວາມເຕັມໃຈຮັບຄວາມທຸກລຳບາກ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ການຮູ້ຈັກແລະການຕິດຕາມພຣະເຢຊູມີຜົນໃນການປ່ຽນແປງຫຼາຍສິ່ງຫຼາຍຢ່າງ, ເຊັ່ນຄວາມເຕັມໃຈໃນການປະຕິເສດຕົວເອງ, ຮັບໃຊ້ຄົນອື່ນ, ແລະທຸກທໍຣະມານເພື່ອພຣະອົງ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ມີບາງຄົນເຊື່ອວ່າການເຊື່ອໃນພຣະເຢຊູມີຜົນເຮັດໃຫ້ບໍ່ມີຊີວິດຊີວາແລະບໍ່ມີຄວາມສົດຊື່ນແຈ່ມໃສ. ຜູ້ນຳສາສນາບາງຄົນກໍໄດ້ສອນຫຼັກການຢ່າງນີ້. ຄຣິສຕຽນໃນສມັຍນີ້ຕ້ອງຕໍ່ສູ້ກັບຄວາມກົດດັນຂອງທຳນຽມປັດຈຸບັນເພື່ອໃຫ້ຊີວິດແຫ່ງຄວາມເຊື່ອປະສົບຜົນສຳເຣັດໃນມາດຕະຖານຂອງໂລກ.

ແພັດດີ ບໍ່ເຊື່ອໃນຫູຕົນເອງ ທີ່ຫົວໜ້າຂອງລາວໄດ້ມາເຕືອນວ່າ, "ຖ້າວ່າເຈົ້າບອກກ່ຽວກັບບັນຫາຕ່າງໆໃຫ້ແກ່ພວກລູກຄ້າຮູ້, ພວກເຂົາກໍຈະບໍ່ຊື້ເຮືອນຫຼັງນີ້, ລູກຄ້າຂອງເຈົ້າກໍຈະບໍ່ໄດ້ຊື້, ແລະພວກເຮົາກໍຈະບໍ່ໄດ້ຄ່າຕອບແທນ. ຈົ່ງເຮັດຕາມລາຍການທີ່ມີຢູ່ນີ້ຖ້າບໍ່ດັ່ງນັ້ນຈະຖືກໄລ່ອອກ." ແພັດດີຫາກໍເປັນຄຣິສຕຽນໃໝ່ ລາວສາມາດຈະເວົ້າວ່າລາວຮູ້ຈັກພຣະເຢຊູໄດ້ຫຼືບໍ່ແລະອີກດ້ານນຶ່ງກໍຫັນໄປຫຼອກຕົ້ມຄົນອື່ນໆ? ການຕັດສິນໃຈຂອງລາວບໍ່ພຽງແຕ່ເຮັດໃຫ້ລາວຕ້ອງເສັຽການຂາຍບ້ານ, ພ້ອມທັງວຽກງານຂອງລາວດ້ວຍ. ທ່ານຈະຍອມເຕັມໃຈເສັຽສະລະຢ່າງນີ້ສຳລັບພຣະຄຣິດບໍ່? ບົດຮຽນນີ້ຈະຊ່ວຍທ່ານໃຫ້ຕັດສິນໃຈຕິດຕາມພຣະຄຣິດເຖິງແມ່ນວ່າຈະເສັຽຂອງທີ່ມີຄ່າຫຼາຍກໍຕາມ.

## <u>ສຶກສາພຣະຄັມພີ</u>

1. **<u>ເຕັມໃຈປະຕິເສດຕົນເອງ:</u>** (ມາຣະໂກ 8:34-38)

ມີຫຼາຍຄົນຄິດວ່າພວກເຂົາສາມາດໄປສວັນດ້ວຍທາງຂອງພວກເຂົາເອງແທນທີ່ຈະແມ່ນທາງຂອງພຣະເຈົ້າ. ພວກເຂົາຢາກຮັກສາການດຳຣົງຊີວິດຂອງພວກເຂົາ. ພຣະເຢຊູໄດ້ບົ່ງໄວ້ຢ່າງແຈ່ມແຈ້ງຕໍ່ພວກຝູງຊົນວ່າຜູ້ໃດກໍຕາມທີ່ຢາກຈະເປັນຜູ້ຕິດຕາມພຣະອົງບໍ່ສາມາດທີ່ຈະບົ່ງການຂອງການລອດພົ້ນບາບ. ຄວາມລອດພົ້ນບາບກັມແມ່ນຕັ້ງຢູ່ເທິງພື້ນຖານຂອງການຕາຍແລະການຄືນພຣະຊົນຂອງພຣະເຢຊູ. ພວກເຮົາໄດ້ຮັບພຣະຄຸນຂອງພຣະເຈົ້າໂດຍທາງຄວາມເຊື່ອ. ພວກເຮົາໄດ້ພົ້ນເມື່ອພວກເຮົາຫາກຖິ້ມໃຈເກົ່າເອົາໃຈໃໝ່ຈາກຄວາມຜິດບາບຂອງພວກເຮົາ, ເຊື່ອວ່າ

ພຣະເຢຊູເປັນບຸດຂອງພຣະເຈົ້າ, ໄດ້ຕາຍສຳລັບພວກເຮົາແລະຟື້ນຄືນພຣະຊົນມາອີກ, ແລະຕໍ່ຈາກນັ້ນຕ້ອງຮັບເອົາພຣະເຢຊູໂດຍທາງຄວາມເຊື່ອໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດພົ້ນບາບແລະໃຫ້ເປັນພຣະຜູ້ເປັນເຈົ້າ.

ພຣະເຢຊູໄດ້ຊ່ອຍມະນຸດໃຫ້ເຂົ້າໃຈວ່າຄົນທີ່ວາງໃຈເຊື່ອໃນພຣະອົງດຳເນີນຊີວິດທີ່ແຕກຕ່າງເກົ່າຊຶ່ງແມ່ນຜົນຂອງຄວາມເຊື່ອພວກເຂົາ. ພຣະເຢຊູໄດ້ບອກເຖິງສາມບາດກ້າວແກ່ພວກທີ່ຕິດຕາມຢ່າງສັດຊື່ວ່າ: ອັນທີນຶ່ງ, ຜູ້ເຊື່ອທີ່ແທ້ຈິງຈະປະຕິເສດຕົວເອງ. ເມື່ອພວກເຮົາຖິ້ມໃຈເກົ່າຈາກຄວາມບາບ, ພວກເຮົາຍອມຮັບວ່າທາງເກົ່າຂອງພວກເຮົາເປັນທາງທີ່ຜິດ. ການຖິ້ມໃຈເກົ່າເອົາໃຈໃໝ່ໝາຍເຖິງການປ່ຽນແປງຄວາມຄິດແລະຊີວິດຂອງພວກເຮົາ. ໃຫ້ສຳນຶກວ່າທາງຂອງພວກເຮົານຳໄປສູ່ທາງສຸດແລະພວກເຮົາຕ້ອງຫັນໄປຫາພຣະເຢຊູ. ອັນທີສອງ, ຄຣິສຕຽນຈະຕ້ອງຍອມແບກໄມ້ກາງແຂນຂອງຕົນ. ໄມ້ກາງແຂນບໍ່ແມ່ນເຄື່ອງເອ້ທີ່ພວກເຮົາເອົາປະດັບຕົວນັ້ນ; ມັນເປັນເຄື່ອງມືຂອງຄວາມຕາຍ. ການແບກໄມ້ກາງແຂນຂອງພວກເຮົາບໍ່ໄດ້ໝາຍແຕ່ຄວາມວ່າປະຕິເສດຕໍ່ສິ່ງຂອງຕ່າງໆຂອງພວກເຮົາເທົ່ານັ້ນ, ໂດຍຄິດວ່າພວກເຮົາສາມາດເຮັດໃຫ້ພຣະເຈົ້າພໍພຣະທັຍໄດ້ຖ້າຫາກບໍ່ມີຂອງຟູມເຟືອຍຫຼູຫຼາບາງຢ່າງ. ພວກເຮົາຕາຍຕໍ່ຕົວເອງແລະຕິດຕາມແຜນການຂອງພຣະເຈົ້າສຳລັບຊີວິດພວກເຮົາຢ່າງໝົດສິ້ນ- ແມ້ກະທັ້ງພົບກັບຄວາມຕາຍ. ສິ່ງສຸດທ້າຍ, ພຣະຄຣິດເຊື້ອເຊີນພວກທີ່ເຊື່ອ:“ຈົ່ງຕິດຕາມເຮົາມາ.” ຄຣິສຕຽນທີ່ແທ້ຈິງເລີ້ມຕົ້ນຄວາມປາຖນາຢູ່ກັບພຣະເຢຊູບໍ່ວ່າພຣະອົງຈະຢູ່ທີ່ໃດ.

ຖ້າຜູ້ໃດຜູ້ນຶ່ງຍັງຢາກຫ້ອຍຊີວິດຂອງລາວຕາມໂລກນີ້, ລາວຈະເສັຽຊີວິດນັ້ນໃນວັນພິພາກສາ. ທຸກໆຄົນຜູ້ທີ່ສູນເສັຽຊີວິດຂອງຕົນ-ຜູ້ທີ່ຍອມຍົກເລີກທາງຊີວິດຂອງພວກເຂົາເພື່ອພຣະເຢຊູ-ຈະຮັກສາຊີວິດນັ້ນໄວ້ໄດ້. ມີພວກທີ່ເຊື່ອຫຼາຍໆຄົນໄດ້ຍອມເສັຽຊີວິດຂອງພວກເຂົາເພາະວ່າພວກເຂົາໄດ້ຕິດຕາມພຣະເຢຊູ; ຫຼາຍໆຄົນກໍຍັງເຮັດຢ່າງນັ້ນເຊັ່ນກັນໃນສມັຍນີ້. ພຣະເຢຊູຕໍ່ວ່າຢ່າງແຂງແຮງແລະແຈ່ມແຈ້ງແລ້ວວ່າຄືໃນຕອນທີ່ພຣະອົງສົນທຽບການໄດ້ສິ່ງຂອງໝົດທັງໂລກກັບຊີວິດຂອງຄົນຜູ້ນຶ່ງ. ແມ່ນຫຍັງທີ່ຄົນຜູ້ນັ້ນຈະແລກປ່ຽນກັບຊີວິດຂອງຕົນມັນຈຶ່ງຈະຄຸ້ມຄ່າ? ລາວອາດຈະມອບສິ່ງຂອງທຸກໆຢ່າງທີ່ລາວມີຢູ່ນັ້ນໃຫ້. ນັ້ນກໍຄືສິ່ງທີ່ພຣະເຢຊູຕ້ອງການ.

ແຕ່ກໍໜ້າເສັຽໃຈ, ທີ່ມີຫຼາຍໆຄົນຄິດຢ້ານວ່າຄົນອື່ນໆຈະຄິດຢ່າງໃດກ່ຽວກັບຕົວພວກເຂົາ. ພວກເຂົາຢ້ານຕໍ່ການຖືກປະຕິເສດຖ້າຫາກພວກເຂົາຫາກຕິດຕາມພຣະຄຣິດ. ພຣະເຢຊູໄດ້ເຕືອນຝູງຊົນວ່າພວກເຂົາກຳລັງຢູ່ໃນຍຸກຂອງການຫຼິ້ນຊູ້ແລະຜິດບາບ. ຖ້າວ່າພວກເຂົາຫາກລະອາຍຕໍ່ພຣະອົງແລະພຣະຄຳຂອງພຣະອົງໃນໂລກນີ້, ພວກເຂົາກໍຈະບໍ່ໄດ້ຍິນສຽງຂອງພຣະອົງກ່າວຕໍ່ພວກເຂົາເມື່ອພຣະອົງຈະສະເດັດກັບມາອີກພ້ອມກັບສະງ່າຣາສີທີ່ມາພ້ອມກັບພວກຝູງເທວະດາບໍຣິສຸດ.

ພວກທີ່ເຊື່ອຈະຕ້ອງເຕັມໃຈຕັດສິນໃຈເຮັດຕາມສິ່ງທີ່ພໍພຣະທັຍພຣະເຈົ້າ, ແທນທີ່ຈະຊອກຫາທາງທີ່ເຫັນແກ່ຕົວເອງ. ການແບກໄມ້ກາງແຂນແມ່ນລວມທັງຄວາມເຕັມໃຈລະຖິ້ມທຸກສິ່ງທີ່ເຮົາຮັກໃນຊີວິດ, ແມ້ກະທັ້ງເຖິງແກ່ຊີວິດຖ້າຫາກຈຳເປັນ, ໃນການຕິດຕາມພຣະເຢຊູ.

## 2. **<u>ພ້ອມທີ່ຈະຮັບໃຊ້</u>**: (ມາຣະໂກ 9:33-37)

ການມີການຕັດສິນໃຈວາງໃຈເຊື່ອແລະຕິດຕາມພຣະເຢຊູ, ພວກທີ່ເຊື່ອຕ້ອງຕຽມຕົວພວກເຂົາເອງໃນການຮັບໃຊ້. ມີແຕ່ພວກທີ່ຫັນໜີຈາກໂລກນີ້ແລະກົດຂອງຄວາມສຳເຣັດຜົນຂອງມັນເທົ່ານັ້ນຈຶ່ງຈະສາມາດຍອມຮັບໄດ້ວ່າການຮັບໃຊ້ເປັນສິ່ງທີ່ຍິ່ງໃຫຍ່. ພວກສາວົກຕ້ອງການທີ່ຈະຮຽນຮູ້ເຣື່ອງຄວາມຈິງຂນະທີ່ພວກເຂົາຮວມກັນຢູ່ໃນເມືອງກາເປນາອູມຊຶ່ງຢູ່ທາງພວກເໜືອແຄມຝັ່ງທະເລຄາລີເລ, ພຣະເຢຊູຕໍ່ວ່າກັບພວກສິບສອງຄົນນັ້ນກ່ຽວກັບການໂຕ້ຖຽງກັນໃນຕອນເດີນທາງມານັ້ນ. ພວກສາວົກພາກັນມິດຢູ່ເພາະວ່າພວກເຂົາໄດ້ຮູ້ວ່າພຣະເຢຊູບໍ່ພໍໃຈກັບການຖົກຖຽງກັນເໝືອນເດັກນ້ອຍຂອງພວກເຂົາທີ່ກ່ຽວກັບໃຜຈະເປັນໃຫຍ່ກວ່າໝູ່. ຫຼັກການເຊື່ອວ່າໃຜຍິ່ງໃຫຍ່ຂອງພວກເຂົາກໍຄືກັນກັບຂອງຊາວໂລກທີ່ຢູ່ອ້ອມຮອບພວກເຂົາ. ພວກເຮົາອາດຄິດວ່າພວກເຂົາບໍ່ໄດ້ຍິນສິ່ງທີ່ພຣະເຢຊູໄດ້ສອນໄວ້ນັ້ນ.

ກ່ອນທີ່ພວກເຮົາຈະກ່າວຕິພວກສາວົກ, ໃຫ້ພວກເຮົາກວດສອບຕົວພວກເຮົາເອງ. ພວກເຮົາມີທາງລັດເພື່ອຈະໄດ້ປຽບຄົນອື່ນບໍ່? ພວກເຮົາຢ້ານຄົນອື່ນລື່ນຫຼືບໍ່ຖ້າຫາກວ່າເຂົາຫາກໄດ້ເລື່ອນຊັ້ນທັ້ງໆທີ່ເຮົາເຮັດດີກວ່າເຂົາ? ຖ້າພວກເຮົາຫາກໄດ້ຢູ່ຮ່ວມກັບພວກສາວົກໃນວັນນັ້ນພວກເຮົາຈະພາກພູມໃຈບໍ່?

ອາດພາບເຖິງຕຳແໜ່ງຂອງອາຈານທີ່ກຳລັງສອນ, ພຣະເຢຊູເອີ້ນໃຫ້ພວກສາວົກມານັ່ງອ້ອມພຣະອົງ. ຝູງຊົນລວມທັງພວກເດັກນ້ອຍທີ່ຢູ່ໃນນັ້ນດ້ວຍ. ພຣະເຢຊູປະກາດວ່າຖ້າຜູ້ໃດຢາກເປັນໃຫຍ່ໃນຣາຊອານາຈັກຂອງພຣະອົງຄືຜູ້ທີ່ຖ່ອມຕົວລົງ, ບໍ່ແມ່ນຖືຕົວໂອ້ອວດ, ແລະໃຫ້ເປັນຜູ້ຮັບໃຊ້, ບໍ່ແມ່ນຜູ້ສັ່ງການ. ພຣະເຢຊູໄດ້ເອີ້ນເອົາເດັກນ້ອຍຄົນນຶ່ງມາຖ້າມກາງພວກສິດສິບສອງຄົນນັ້ນແລະອູ້ມເດັກນັ້ນໃນອ້ອມແຂນຂອງພຣະອົງ. ພຣະເຢຊູໃຫ້ຄຸນຄ່າຂອງການຕ້ອນຮັບເອົາເດັກນ້ອຍຜູ້ນຶ່ງໄວ້ໃນນາມຂອງພຣະອົງກໍທໍ່ກັບການຮັບເອົາພຣະອົງແລະຜູ້ຊົງໃຊ້ພຣະອົງມາ.

ການສອນຂອງພຣະເຢຊູເປັນຕົວແທນໃຫ້ເຫັນການລົດຄຸນຄ່າຂອງມະນຸດ, ແລະພວກຄຣິສຕຽນຕ້ອງເລືອກມາດຕະຖານທີ່ແຕກຕ່າງ. ພວກທີ່ຕິດຕາມພຣະເຢຊູເຂົ້າໃຈວ່າຄວາມຍິ່ງໃຫຍ່ອັນແທ້ຈິງແມ່ນມີໃນທາງການຮັບໃຊ້.

## 3. <u>ຕຽມຕົວຮັບເອົາຄວາມຍາກລຳບາກ</u>: (ມາຣະໂກ 10:32-34)

ການຕິດຕາມພຣະຄຣິດເລີ້ມຕົ້ນດ້ວຍການຕາຍຕໍ່ພວກເຮົາເອງແລະໄວ້ວາງໃຈໃນພຣະເຢຊູ. ມັນຕໍ່ເນື່ອງດ້ວຍການທີ່ພວກເຮົາມີຄວາມຍິນດີໃນການຮັບໃຊ້ຄົນອື່ນໆໃນພຣະນາມຂອງພຣະອົງ. ແຕ່ວ່າ, ສິ່ງທີ່ຫຼີກເວັ້ນບໍ່ໄດ້ນັ້ນກໍຄື, ພວກເຮົາຈະປະສົບກັບຄວາມຍາກລຳບາກເໝືອນດັ່ງພຣະອົງໄດ້ຮັບ. ພຣະເຢຊູເຂົ້າໃຈແຈ່ມແຈ້ງທີ່ສຸດວ່າຈະມີຫຍັງເກີດຂຶ້ນໃນພາຍໜ້າຂນະທີ່ພຣະອົງເດີນໃນເສັ້ນທາງ**ໄປກຸງເຢຣູຊາເລັມ**. ພຣະເຢຊູບໍ່ໄດ້ລີ້ຊ່ອນຕົວຕາມຫຼັງພວກສາວົກ, ແຕ່ວ່າອອກໜ້າ**ຍ່າງໄປກ່ອນພວກເຂົາ**. ພຣະເຢຊູບໍ່ໄດ້ຫຼົບລີ້ຈາກຄວາມທໍຣະມານ. ພຣະອົງພະຍາຍາມຍ່າງເຕັມທີ່ມຸ້ງໜ້າຫາມັນເພາະວ່າຜ່ານການຕາຍແຕ່ພຽງເທົ່ານັ້ນທີ່ພຣະອົງຈະສາມາດສ້າງຊີວິດຄືນໃໝ່ໄດ້.

ຝູງຊົນທີ່ອ້ອມຮອບພຣະເຢຊູຊຶ່ງລວມທັງພວກສາວົກສິບສອງຄົນ; ກໍຍ່າງຕິດຕາມໄປດ້ວຍກັນ. ພວກເຂົາມີພຶດຕິການໂຕ້ຕອບອອກມາດ້ວຍວິທີຕ່າງໆກັນ. ບາງພວກກໍ**ສງົບສົນເທ**. ໝາຍເຖິງບໍ່ແມ່ນຕື່ນເຕັ້ນຊື່ໆ. ບາງພວກກໍ**ຢ້ານກົວ**; ບາງທີກໍອາດຈະຢ້ານຕໍ່ອຳນາດຂອງພວກຄົນທີ່ຕໍ່ສູ້ກັບພຣະເຢຊູ. ສິ່ງທີ່ເລີກໄປກ່ວານັ້ນກໍແມ່ນມາຈາກ ອັນຕລາຍທີ່ພວກເຂົາບໍ່ອາດຈະເຂົ້າໃຈມັນໄດ້. ພຣະເຢຊູຕ້ອງການໃຫ້ພວກ**ສິບສອງ**ຄົນເຂົ້າໃຈຕໍ່ເຫດການທັງໝົດທີ່ກຳລັງຈະເກີດຂຶ້ນ. ພຣະອົງແຍກພວກເຂົາ**ອອກໄປຕ່າງຫາກ**, ຈາກຄົນອື່ນໆທີ່ຕິດຕາມມາດ້ວຍກັນນັ້ນ. ພຣະເຢຊູກ່າວຕໍ່ພວກເຂົາຢ່າງເປີດເຜີຍ, ໂດຍບໍ່ໄດ້ປິດບັງສິ່ງໃດໄວ້ເລີຍວ່າພຣະອົງຈະຖືກມອບໄວ້**ໃນມື**ຂອງພວກຜູ້ນຳສາສນາ ພວກເຂົາຈະ**ກ່າວໂທດໃສ່ພຣະອົງໃຫ້ເຖິງແກ່ຄວາມຕາຍ**. ຂນະທີ່ພວກຢິວບໍ່ມີອຳນາດທີ່ສັ່ງປະຫານຊີວິດພຣະອົງ, ພວກເຂົາກໍຈັບສົ່ງໃຫ້ແກ່**ພວກຕ່າງຊາດ**-ໝາຍເຖິງພວກຊາວໂຣມ-ຜູ້ທີ່ມີອຳນາດສັ່ງປະຫານຊີວິດໄດ້.

ພຣະເຢຊູໄດ້ເຂົ້າໃຈເຖິງລາຍລະອຽດທຸກຢ່າງຂອງຄວາມຍາກລຳບາກທີ່ພຣະອົງຕ້ອງທົນທຸກນັ້ນ. ພວກທີ່ບໍ່ເຊື່ອຈະ**ເຍາະເຍີ້ຍພຣະອົງ, ຖົ່ມນ້ຳລາຍໃສ່ພຣະອົງ, ຂ້ຽນຕີພຣະອົງ, ແລະຂ້າພຣະອົງ**. ມັນແມ່ນຄວາມກ້າຫານທີ່ສຸດທີ່ຈະໃຫ້ສິ່ງເຫຼົ່ານີ້ກາຍເປັນຈິງທັງໆທີ່ຊາບເຖິງພັຍອັນຕລາຍຕ່າງໆທີ່ຈະມີຂຶ້ນ. ຄືມັນຄ້າຍກັບວ່າເດີນເຂົ້າຫາມືພວກຄົນທີ່ມີເຈດຕະນາທຳຮ້າຍຢ່າງໜັກໜ່ວງ. ຈົ່ງສັງເກດການຕັດສິນໃຈຂອງພຣະເຢຊູໃນການມຸ້ງໜ້າປະເຊີນກັບຄວາມຕາຍ. ຄຳວ່າ"**ພວກເຮົາຈະຕ້ອງໄປ**" ຊີ້ໃຫ້ເຫັນວ່າພຣະອົງຕັ້ງໜ້າທີ່ຈະໄປກຸງເຢຣູຊາເລັມໂດຍການຮູ້ຈັກວ່າຈະຕ້ອງທົນທຸກທໍຣະມານແລະຈະຖືກຂ້າ. ມີບາງຄົນກໍເຕັມໃຈທີ່ຈະເຂົ້າສູ່ບັນຫາຫຍຸ້ງຍາກຕ່າງໆຖ້າພວກເຂົາເຊື່ອວ່າຍັງມີໂອກາດທີ່ຈະໄດ້ຊັຍຊະນະ. ພຣະເຢຊູເດີນຕໍ່ໄປເຖິງແມ່ນວ່າຄວາມທຸກຍາກລຳບາກອັນໃຫຍ່ຫຼວງລໍຢູ່ຂ້າງໜ້າ.

ໃຫ້ອ່ານປໂຍກທີ່ພຣະເຢຊູໄດ້ກ່າວໄວ້. ພຣະອົງ**ຈະຖືກຈັບມອບໄວ້**. ພວກຢິວ**ຈະກ່າວໂທດພຣະອົງ**. ພວກຊາວໂຣມ**ຈະເຍາະເຍີ້ຍພຣະອົງ, ຖົ່ມນໍ້າລາຍໃສ່ພຣະອົງ, ຂ້ຽນຕີພຣະອົງ, ແລະຂ້າພຣະອົງ**. ບໍ່ມີອັນໃດແນ່ນອນ ໃນອະນາຄົດ. ມາຣະໂກໄດ້ບັນທຶກໄວ້ວ່ານີ້ເປັນເທື່ອທີສາມແລ້ວ, ທີ່ພຣະເຢຊູທຳນວາຍເຖິງຄວາມຕາຍຂອງພຣະອົງ.

ນີ້ຄືການສະແດງໃຫ້ເຫັນເຖິງການເຮັດຕາມນໍ້າພຣະທັຍພຣະບິດາຂອງພຣະອົງ. ຄ້າຍຄືກັນນີ້, ທີ່ພຣະເຢຊູໄດ້ຮູ້ຈັກຄັກແນ່ວ່າພຣະອົງຈະເປັນຄືນມາໃນວັນຖ້ວນສາມ. ຢ່າງບໍ່ໜ້າເຊື່ອເລີຍວ່າ, ພວກສາວົກຈື່ຄໍາເວົ້າຂອງພຣະອົງໄດ້ກ່ຽວກັບການຄືນພຣະຊົນກໍແມ່ນເມື່ອຕອນທີ່ພຣະອົງໄດ້ຟື້ນຄືນມາໃຫ້ເຫັນເປັນຈິງແຕ່ເທົ່ານັ້ນ.

ພຣະເຢຊູເລັ່ງເຖິງພຣະອົງເອງວ່າບຸດມະນຸດ, ຄົງຈະເປັນຊື່ທີ່ພຣະອົງເຫັນຊອບຫຼາຍ(ໄດ້ໃຊ້ 88 ເທື່ອໃນພາກພຣະສັນຍາໃໝ່). ນາມຊື່ນີ້ໄດ້ເລັ່ງໃຫ້ເຫັນພາບທັງສອງຢ່າງຄືພາບຝ່າຍມະນຸດແລະຄວາມເປັນພຣະເຈົ້າຂອງພຣະອົງ. ພຣະອົງບໍ່ອາດສາມາດກາຍເປັນພຣະຜູ້ໂຜດໃຫ້ພົ້ນແລະເປັນເຄື່ອງຖວາຍບູຊາສໍາລັບມະນຸດຊາດໄດ້ນອກຈາກຈະຕ້ອງເກີດມາເປັນມະນຸດ.

ພຣະເຢຊູເຕັມໃຈທີ່ຈະທົນທຸກລໍາບາກແລະຕໍ່ຄວາມຕາຍເພື່ອພວກເຮົາຈະສາມາດພົ້ນໄດ້. ຖ້າວ່າພວກເຮົາຕິດຕາມພຣະເຢຊູ, ພວກເຮົາອາດຈະຖືກຂົ່ມເຫັງສໍາລັບຄວາມເຊື່ອຂອງພວກເຮົາ. ພວກທີ່ເຊື່ອຫຼາຍຄົນໄດ້ຖືກຂ້າຕາຍທຸກໆປີທົ່ວໂລກເພາະຄວາມເຊື່ອຂອງພວກເຂົາທີ່ມີຕໍ່ພຣະຄຣິດ. ພວກເຮົາກໍເໝືອນກັນ, ອາດຈະທົນທຸກລໍາບາກສໍາລັບພຣະເຢຊູ. ຖ້າວ່າພວກເຮົາຫາກຢາກຕິດຕາມພຣະຄຣິດ, ພວກເຮົາຕ້ອງເຕັມໃຈຕັ້ງໝັ້ນຢູ່ໃນຄວາມຈິງບໍ່ວ່າຈະມີຫຍັງເກີດຂຶ້ນກໍຕາມ.

## <u>ບົດຮຽນຊີວິດ</u>

ການເຮັດໃຫ້ພຣະເຢຊູເປັນອາຈານຂອງທ່ານໝາຍເຖິງການຍອມຕໍ່ຕົວຂອງທ່ານເອງ, ການປະຕິເສດແຜນການຂອງທ່ານເອງ, ແລະການຕິດຕາມການຊົງນໍາພາຂອງພຣະອົງສໍາລັບຊີວິດທ່ານ. ຕັດສິນໃຈເດັດຂາດທີ່ຈະຮັບໃຊ້ຄົນອື່ນໆໃນນາມຂອງພຣະອົງ, ເໝືອນດັ່ງທີ່ພຣະອົງສະເດັດມາຮັບໃຊ້ແທນທີ່ຈະມາເພື່ອໃຫ້ຜູ້ອື່ນຮັບໃຊ້, ການຮູ້ຈັກວ່າທ່ານອາດຈະພົບຄວາມທຸກລໍາບາກສໍາລັບການຕິດຕາມພຣະຄຣິດ, ທ່ານຕ້ອງເຕັມໃຈມີສ່ວນຮ່ວມໃນຄວາມຍາກລໍາບາກຂອງພຣະອົງ.

ທ່ານຈະໂຕ້ຕອບຕໍ່ການຮຽກເອີ້ນຂອງພຣະເຈົ້າໃຫ້ປະຕິເສດຕົວເອງ, ຮັບແບກໄມ້ກາງແຂນ, ແລະຕິດຕາມພຣະອົງໄປຢ່າງໃດ? ທ່ານໄດ້ຕັດສິນໃຈຕິດຕາມພຣະເຢຊູແລ້ວບໍ່? ໃຫ້ສໍານຶກເຖິງສິ່ງເຫຼົ່ານີ້:

- ອັນໃດທີ່ມີຄຸນຄ່າຫຼາຍສໍາລັບທ່ານ, ວິຖີການດໍາເນີນຊີວິດຫຼືຊີວິດຂອງທ່ານ? (ຈໍາໄວ້ວ່າທ່ານສາມາດໄດ້ສິ່ງຂອງໝົດທັງໂລກແຕ່ເສັຽຊີວິດອັນແທ້ຈິງຂອງທ່ານຈະມີປໂຍດອັນໃດ.)
- ອັນໃດສໍາຄັນທີ່ສຸດ, ການຖືກຮັບຕ້ອນຈາກພວກຄົນຜິດບາບຫຼືການຖືກຮັບເອົາໂດຍພຣະຜູ້ໄຖ່ໃຫ້ພົ້ນບາບ?
- ອັນໃດເປັນໜ້ານັບຖືຫຼາຍກວ່າກັນ, ບຸກບົນໃຫ້ໄດ້ເປັນນາຍຫຼືຮັບໃຊ້ຄົນອື່ນໆໃນນາມຂອງພຣະເຢຊູ?

ການຕິດຕາມພຣະຄຣິດເລີ້ມຕົ້ນຈາກການຕັດສິນໃຈທີ່ເປັນຕົ້ນຕໍເຫຼົ່ານີ້: ຄືວາງໃຈເຊື່ອພຣະອົງໝົດທັງຊີວິດຂອງທ່ານ. ທ່ານສໍານຶກໄດ້ວ່າຄວາມບາບຂອງທ່ານມີແຕ່ຈະນໍາທ່ານໄປສູ່ຄວາມຕາຍອັນຕລອດໄປເປັນນິດ. ທ່ານຕ້ອງຖິ້ມໃຈເກົ່າຈາກຄວາມຜິດບາບແລະຮັບເອົາໃຈໃໝ່ໂດຍວາງຄວາມເຊື່ອຂອງທ່ານໃນພຣະເຢຊູ, ການຮັບເອົາພຣະຄຣິດໃຫ້ເປັນພຣະຜູ້ເປັນເຈົ້າແລະພຣະຜູ່ຊ່ວຍໃຫ້ພົ້ນຂອງທ່ານ, ແລະການຮັບເອົາຊີວິດອັນຕລອດໄປເປັນນິດໂດຍຜ່ານພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA